Milwaukee Area Technical College

# ຂໍ້ມູນການຊ່ວຍເຫຼືອດ້ານການເງິນຂອງລັດຖະບານກາງປີ 2022-23

## ສະໝັກຜ່ານອອນໄລນ໌ fafsa.gov

ຖ້າທ່ານກໍາລັງວາງແຜນທີ່ຈະເຂົ້າຮຽນໃນ MATC ໃນລະຫວ່າງປີຮຽນ 2022-23, ທ່ານໄດ້ຮັບການຊຸກຍູ້ໃຫ້ຂໍສະໝັກ ການຊ່ວຍເຫຼືອທາງການເງິນຂອງລັດຖະບານກາງ. ສະໝັກຂໍທຶນຊ່ວຍເຫຼືອທາງດ້ານການເງິນຂອງລັດຖະບານກາງໂດຍການປະກອບໃບຄໍາຮ້ອງທີ່ບໍ່ເສຍຄ່າສໍາລັບການຊ່ວຍເຫຼືອນັກຮຽນຂອງລັດຖະບານກາງ (Free Application for Federal Student Aid, FAFSA) ປີ 2022-23 ທີ່ **fafsa.gov. ລະຫັດຂອງໂຮງຮຽນລັດຖະບານກາງ MATC ແມ່ນ 003866.** ສະໝັກກ່ອນໄວໆນີ້ເພື່ອວ່າທ່ານຈະບໍ່ພາດເງິນຊ່ວຍເຫຼືອທີ່ມີໃຫ້. **ການສະໝັກຂໍເອົາການຊ່ວຍເຫຼືອດ້ານການເງິນ ຂອງລັດຖະບານກາງບໍ່ຮັບປະກັນວ່າທ່ານຈະໄດ້ຮັບສະ  ເໝີ.** ນັກຮຽນຕ້ອງຮັບຜິດຊອບຕໍ່ຍອດເງິນທີ່ຍັງຄ້າງຄາເຊິ່ງບໍ່ໄດ້ຮັບການຄຸ້ມຄອງໂດຍ ການຊ່ວຍເຫຼືອດ້ານການເງິນຂອງລັດຖະບານກາງ.

## ຂັ້ນຕອນທີ ໜຶ່ງ

### ການລົງນາມໃນ FAFSA

ໃນຕອນທ້າຍຂອງໃບສະໝັກ, ທ່ານ ແລະ ພໍ່ແມ່ຂອງທ່ານ (ຖ້າທ່ານແມ່ນນັກຮຽນທີ່ເພິ່ງພາອາໄສນໍາພໍ່ແມ່) ຕ້ອງຕົກລົງເຫັນດີກັບຄໍາຖະແຫຼງຢັ້ງຢືນຂອງ FAFSA ແລະເຊັນໃບສະໝັກຂອງທ່ານດ້ວຍເອເລັກໂຕຣນິກໂດຍໃຊ້ບັດປະຈໍາ ຕົວນັກຮຽນທີ່ຊ່ວຍເຫຼືອໂດຍລັດຖະບານກາງ (Federal Student Aid ID, FSA ID). ທ່ານ ແລະ ພໍ່ແມ່ຂອງທ່ານ (ຖ້າທ່ານແມ່ນຜູ້ທີ່ເພິ່ງພາອາໄສຢູ່ນໍາພໍ່ແມ່) ຈະຕ້ອງໃຊ້ບັດປະຈໍາ ຕົວຂອງທ່ານເອງ (ຊື່ຜູ້ໃຊ້ ແລະ ລະຫັດຜ່ານ). ຖ້າທ່ານຕ້ອງການ  FSA ID, ສະໝັກໄດ້ທີ່ **fsaid.ed.gov.**

ເພື່ອສະໝັກເອົາ FSA ID ໃນຂະນະທີ່ຍັງຢູ່ໃນໃບສະໝັກ FAFSA, ເລືອກປຸ່ມ "ຮ້ອງຂໍສໍາລັບ FSA ID (Apply for FSA ID)". ຖ້າທ່ານລືມຊື່ຜູ້ໃຊ້ ແລະ ລະຫັດຜ່ານຂອງທ່ານ, ເລືອກ“ ລືມຊື່ຜູ້ໃຊ້ (Forgot Username)” ຫຼື “ລືມລະຫັດຜ່ານ (Forgot Password).” ໃຫ້ຊາບວ່າທ່ານຈໍາເປັນຕ້ອງໃຫ້ທີ່ຢູ່ອີເມວ ຫຼື ເບີໂທລະສັບມືຖືຂອງທ່ານ ຫຼື ໃຫ້ຄໍາຕອບຕໍ່ຄໍາ ຖາມຢືນຢັນຂອງທ່ານເພື່ອໃຫ້ໄດ້ຊື່ຜູ້ໃຊ້ ຫຼື ຕັ້ງລະຫັດຜ່ານຂອງທ່ານໃໝ່.

## ຂັ້ນຕອນທີ ສອງ

### ຈົ່ງເຮັດໃຫ້ສໍາເລັດ FAFSA ຂອງທ່ານທີ່ fafsa.gov

ກົດທີ່“ ເລີ່ມຕົ້ນທີ່ນີ້ ຫຼື ເຂົ້າສູ່ລະບົບ (Start Here or Log In.)” ເລືອກເອົາສົກຮຽນປີ 2022-23 ແລະ ເຮັດໃຫ້ສໍາເລັດ 2021-22 FAFSA.



## ຂັ້ນຕອນທີ ສາມ

### ສັງລວມຂໍ້ມູນທີ່ຈໍາເປັນເພື່ອສະໝັກການຊ່ວຍເຫຼືອດ້ານການເງິນຂອງລັດຖະບານກາງ

ເພື່ອເຮັດໃຫ້ສໍາເລັດ 2022-23 FAFSA ຂອງທ່ານຜ່ານອອນໄລນ໌ ທ່ານຈະຕ້ອງໃຊ້ຂໍ້ມູນຈາກໃບແຈ້ງ ຄືນພາສີຂອງລັດຖະບານກາງໃນປີ 2020 ຂອງທ່ານ. ຖ້າທ່ານຍັງບໍ່ທັນໄດ້ເຮັດສໍາເລັດການຄືນພາສີຂອງລັດຖະບານກາງ 2020, ໃຫ້ເຮັດທັນທີ. ທ່ານແມ່ນນັກຮຽນທີ່ເພິ່ງພາອາໄສຢູ່ນໍາເວັ້ນເສຍແຕ່ວ່າທ່ານເກີດກ່ອນວັນທີ 1 ມັງກອນ 1998, ແຕ່ງງານແລ້ວ, ມີຜູ້ເພິ່ງພາອາໄສທ່ານສະໜັບສະໜູນ ຫຼື ເປັນນັກຮົບເກົ່າ. ຖ້າທ່ານເປັນນັກສຶກສາທີ່ເພິ່ງພາອາໄສຢູ່ນໍາ, ທ່ານກໍ່ຈະຕ້ອງສະໜອງການຄືນພາສີໃຫ້ລັດຖະບານກາງຂອງພໍ່ແມ່ ຂອງທ່ານໃນ 2020 ແລະ ຂໍ້ມູນລາຍໄດ້ສໍາລັບປີ 2020. ທ່ານອາດຈະຄາດຄະເນລາຍໄດ້ໃນ 2020 ຂອງທ່ານໂດຍໃຊ້ຫົວສິ້ນໃບແຊັກໃບສຸດທ້າຍຂອງທ່ານ ຫຼື W-2 ຂອງທ່ານຈາກວຽກໃນ 2020 ຂອງທ່ານ. ທ່ານໄດ້ຮັບການຊຸກຍູ້ໃຫ້ໃຊ້ຕົວເລືອກ IRS ໃນການເກັບພາສີໃນຂະນະທີ່ກໍາລັງສົ່ງ FAFSA ຂອງທ່ານ. ຫຼັງຈາກທີ່ທ່ານຍື່ນເອກະສານແຈ້ງຄືນພາສີໃຫ້ລັດຖະບານກາງໃນປີ 2020 ຂອງທ່ານແລ້ວ, ທ່ານຈະຕ້ອງປັບປຸງຂໍ້ມູນໃນໃບສະໝັກ 2022-23 FAFSA ຂອງທ່ານ.

## ຂັ້ນຕອນທີ ສີ່

ທ່ານຈະໄດ້ຮັບບົດລາຍງານການຊ່ວຍເຫຼືອນັກຮຽນ (Student Aid Report, SAR) ທາງເອເລັກໂຕຣນິກ ຫຼື ເປັນເຈ້ຍ ຈາກຜູ້ດໍາເນີນວຽກງານ ການຊ່ວຍເຫຼືອນັກຮຽນຂອງລັດຖະບານກາງ. ທ່ານຈະໄດ້ຮັບ SAR ທາງອີເລັກໂທຣນິກຖ້າທ່ານລະບຸທີ່ຢູ່ອີເມວໃນຂະນະທີ່ກໍາລັງດໍາເນີນການເຮັດ FAFSA ຂອງທ່ານ.

ທົບທວນ SAR ຢ່າງລະມັດລະວັງ ແລະ ໃຫ້ແນ່ໃຈວ່າຂໍ້ມູນຖືກຕ້ອງ. ຖ້າທ່ານເຫັນຂໍ້ມູນທີ່ບໍ່ຖືກຕ້ອງ, ທໍາການແກ້ໄຂ FAFSA ຂອງທ່ານ ຜ່ານທາງ fafsa.gov. ຫ້ອງການຊ່ວຍເຫຼືອດ້ານການເງິນ MATC ຈະໄດ້ຮັບຂໍ້ມູນປັບປຸງທາງອີເລັກໂທຣນິກຈາກພະແນກສຶກສາຂອງສະຫະລັດອາເມລິກາ (U.S. Department of Education).

# ຂໍ້ມູນທີ່ສໍາຄັນອື່ນໆ

**ທ່ານຈະບໍ່ໄດ້ຮັບການຊ່ວຍເຫຼືອດ້ານການເງິນຂອງລັດຖະບານກາງຂອງ MATC ສໍາລັບສົກຮຽນ 2022-23** ຈົນກວ່າປີ 2022-23 FAFSA ຂອງທ່ານໄດ້ຖືກດໍາເນີນການແລ້ວ ແລະ ຫ້ອງການການຊ່ວຍເຫຼືອດ້ານການເງິນຈາກພະແນກສຶກສາສະຫະລັດອາເມລິກາໄດ້ຮັບຂໍ້ມູນແລ້ວ.

ຍື່ນທຸກເອກະສານ / ເອກະສານທີ່ຖືກຮຽກຮ້ອງໂດຍຫ້ອງການຊ່ວຍເຫຼືອການເງິນ ໃຫ້ໄວເທົ່າທີ່ຈະໄວໄດ້. ນີ້ແມ່ນສິ່ງທີ່ສໍາຄັນໂດຍສະເພາະຖ້າ FAFSA ຂອງທ່ານຖືກຄັດເລືອກເພື່ອການຢືນຢັນ.

**ເພື່ອໃຫ້ໄດ້ຮັບຄ່າທໍານຽມຫຼັກສູດ ຫຼື ຈອງເລື່ອນການຮຽນ, ຫ້ອງການຊ່ວຍເຫຼືອການເງິນຈໍາເປັນຕ້ອງໄດ້ຮັບ:**

- ການປະກອບສ່ວນຂອງຄອບຄົວທີ່ຄາດຫວັງໄວ້ (Expected Family Contribution, EFC) ຈາກ 2022-23 FAFSA ຂອງທ່ານທີ່ດໍາເນີນແລ້ວ.
- ການຢືນຢັນວ່າການຊ່ວຍເຫຼືອດ້ານການເງິນຂອງລັດຖະບານກາງຂອງທ່ານໄດ້ມອບໃຫ້ແລ້ວ

**ທ່ານຕ້ອງໄດ້ເຂົ້າຮຽນ MATC ໃນລະດັບການສຶກສາທີ່ມີເງື່ອນໄຂ ຫຼື ລະດັບຊັ້ນສູງກ່ອນການສະໝັກ ເຂົ້າຮຽນເພື່ອໃຫ້ມີສິດໄດ້ຮັບການຊ່ວຍເຫຼືອທາງການເງິນຂອງລັດຖະບານກາງ.**

ສະຖານະພາບການສຶກສາຂອງທ່ານຕ້ອງເປັນທີ່ພໍໃຈ, ຄໍາເຕືອນ ຫຼື ການທົດລອງເພື່ອຈະມີສິດໄດ້ຮັບການຊ່ວຍເຫຼືອທາງການເງິນຂອງລັດຖະບານກາງ.

**ທ່ານຕ້ອງໄດ້ລົງທະບຽນໃນຢ່າງໜ້ອຍ ຫົກໜ່ວຍກິດ ຊົ່ວໂມງ,** ນັບຈາກວັນທີເຮັດການສໍາຫຼວດການຊ່ວຍເຫຼືອດ້ານການເງິນຂອງລັດຖະບານກາງ, ເພື່ອໃຫ້ມີສິດໄດ້ຮັບເງິນກູ້ຢືມຈາກລັດຖະບານກາງ ແລະ ການຊ່ວຍເຫຼືອລ້າຂອງລັດ. ວັນທີໃຫ້ການຊ່ວຍເຫຼືອດ້ານການເງິນທີ່ມີຄວາມສໍາ ຄັນສາມາດເບິ່ງໄດ້ທີ່ **http://www.matc.edu/costs-scholarships-aid/cost-aid-deadlines.html.** ນອກຈາກນັ້ນ, ເພື່ອໃຫ້ການກູ້ຢືມເງິນຂອງທ່ານໄດ້ຮັບການດໍາເນີນການ, ທ່ານຕ້ອງເຮັດໃຫ້ສໍາເລັດຄໍາແນະນໍາກ່ຽວກັບການໃຫ້ເງິນກູ້ຜ່ານອອນໄລນ໌ ແລະ ໃຫ້ເຊັນບົດບັນທຶກການສັນຍາໃຊ້ເງິນຫຼັກຜ່ານທາງອອນໄລນ໌.

MATC ຈະສົ່ງອີເມວ ແຈ້ງໃຫ້ທ່ານຊາບກ່ຽວກັບຊຸດການຊ່ວຍເຫຼືອດ້ານການເງິນຂອງລັດຖະບານກາງທີ່ມອບໃຫ້ທ່ານຈະຖືກສົ່ງໄປຫາບັນຊີອີເມວ MATC ຂອງທ່ານ.

MATC ຊຸກຍູ້ໃຫ້ນັກຮຽນທຸກຄົນສະໝັກ ຂໍການຊ່ວຍເຫຼືອດ້ານການເງິນຂອງລັດຖະບານກາງ ແລະ ໃຫ້ດໍາເນີນ FAFSA ກ່ອນວັນເວລາທີ່ໝົດກໍາ ນົດຂອງພວກເຮົາໃນວັນທີ 1 ມິຖຸນາ 2022. ທ່ານສາມາດຕິດຕໍ່ຫາຫ້ອງການຊ່ວຍເຫຼືອດ້ານການເງິນຂອງ MATC ຖ້າມີຄໍາຖາມ. ພວກເຮົາຕັ້ງຢູ່ຫ້ອງ S115 ທີ່ວິທະຍາເຂດໃນຕົວເມືອງ Milwaukee ແລະ ຢູ່ໃນຫ້ອງການບໍລິການນັກສຶກສາທີ່ Mequon, Oak Creek ແລະ ວິທະຍາເຂດ West Allis. ທ່ານຍັງສາມາດຕິດຕໍ່ພວກເຮົາໄດ້ທີ່ ຫຼື finaid@matc.edu.

**ຂະບວນການຢືນຢັນການຊ່ວຍເຫຼືອດ້ານການເງິນຂອງລັດຖະບານກາງ**
ຖ້າທ່ານໄດ້ຮັບການຄັດເລືອກສໍາລັບການຢືນຢັນການຊ່ວຍເຫຼືອດ້ານການເງິນຂອງລັດຖະບານກາງໂດຍພະແນກສຶກສາສະຫະລັດອາເມລິກາ, ຫ້ອງການຊ່ວຍເຫຼືອດ້ານການເງິນຂອງ MATC ຈະແຈ້ງໃຫ້ທ່ານຊາບກ່ຽວກັບຂໍ້ມູນການຢັ້ງຢືນໃດທີ່ທ່ານຈໍາ ເປັນຕ້ອງໄດ້ສົ່ງ.

**ຮຽນຄືນຫຼັກສູດ**
**ກົດລະບຽບຂອງລັດຖະບານກາງຈໍາກັດຈໍາ ນວນຄັ້ງທີ່ນັກຮຽນສາມາດຮຽນຄືນຫຼັກສູດ ແລະ ໄດ້ຮັບການຊ່ວຍເຫຼືອດ້ານການເງິນລັດຖະບານກາງສໍາ ລັບຫຼັກສູດນັ້ນ:**

- ນັກຮຽນອາດຈະໄດ້ຮັບການຊ່ວຍເຫຼືອເພື່ອຮຽນຄືນ ຫຼັກສູດທີ່ຜ່ານມາແລ້ວໄປອີກຄັ້ງໜຶ່ງ.
- ນັກຮຽນອາດຈະໄດ້ຮັບການຊ່ວຍເຫຼືອໃນເວລາທີ່ຮຽນຄືນ ວິຊາທີ່ບໍ່ຜ່ານໃນເມື່ອກ່ອນ, ບໍ່ນັບຈໍານວນຄັ້ງທີ່ເຂົ້າຮຽນຫຼັກສູດນັ້ນ ແລະ ບໍ່ຜ່ານ.
- ຖ້ານັກຮຽນຮຽນຄືນຫຼັກສູດທີ່ບໍ່ໄດ້ຮັບການຊ່ວຍເຫຼືອ, ການຄິດໄລ່ຄືນການຊ່ວຍເຫຼືອແມ່ນບໍ່ລວມໜ່ວຍກິດສໍາລັບຫຼັກສູດທີ່ຮຽນຄືນ. ຖ້າມີຍອດຄົງເຫຼືອເຖິງກໍານົດຫຼັງຈາກຄິດໄລ່ຄືນໃໝ່, ນັກຮຽນຕ້ອງໄດ້ຈ່າຍເງິນເພື່ອເຂົ້າຮຽນຫຼັກສູດ.
- ກົດລະບຽບນີ້ນໍາໃຊ້ ບໍ່ວ່ານັກຮຽນຈະໄດ້ຮັບ ຫຼື ບໍ່ໄດ້ຮັບການຊ່ວຍເຫຼືອສໍາ ລັບການລົງທະບຽນກ່ອນໜ້ານີ້ໃນຫຼັກສູດ.

**ເງິນຊ່ວຍເຫຼືອການສຶກສາຂອງລັດຖະບານກາງ (Federal Pell Grant) - ຈໍາກັດສິບສອງພາກຮຽນເຕັມເວລາ**
ກົດລະບຽບການຮ່ວມທຶນຕາມຄວາມເໝາະສົມປີ 2012 (Consolidated Appropriations Act) ໄດ້ຖືກລົງນາມເປັນກົດໝາຍ. ກົດໝາຍ ຫຼຸດຜ່ອນໄລຍະເວລາຂອງການມີສິດໄດ້ຮັບເງິນຊ່ວຍເຫຼືອການສຶກສາຂອງລັດຖະບານກາງໃຫ້ແກ່ຜູ້ມີສິດໄດ້ຮັບຈໍາກັດອາຍຸການຮຽນ 12 ພາກຮຽນ. ນັກສຶກສາຜູ້ທີ່ໄດ້ຮັບເງິນຊ່ວຍເຫຼືອການສຶກສາທຽບເທົ່າ 12 ພາກຮຽນເຕັມເວລາຈະບໍ່ມີສິດໄດ້ຮັບເງິນຊ່ວຍເຫຼືອນີ້ສໍາ ລັບພາກຮຽນໃນອະນາຄົດ. ການເຂົ້າຮຽນເຕັມເວລາແມ່ນຖືກກໍານົດເປັນ 12 ໜ່ວຍກິດ ຫຼື ຫຼາຍໜ່ວຍກິດຕໍ່ພາກຮຽນ.

## ສໍາລັບການຊ່ວຍເຫຼືອເພີ່ມເຕີມເພື່ອເຮັດໃຫ້ສໍາເລັດ FAFSA, ກະລຸນາໂທຫາ: ສູນຂໍ້ມູນຂ່າວສານການຊ່ວຍເຫຼືອນັກຮຽນຂອງລັດຖະບານກາງ (Federal Student Aid Information Center, FSAIC) - 1.800.433.3243

*MATC ແມ່ນສະຖາບັນເພື່ອດໍາເນີນການຢືນຢັນ/ໃຫ້ໂອກາດທີ່ເທົ່າທຽມກັນ ແລະ ປະຕິບັດຕາມທຸກຂໍ້ກໍານົດຂອງກົດໝາຍວ່າດ້ວຍຄົນອາເມລິກາຜູ້ທີ່ພິການ (Americans With Disabilities Act).*